Weekly news update from **25-29 December, 2017** related to land and natural resources in Laos.
**Summarized by** LIWG Communication Officer

…………………………......

ສະຫຼຸບຂ່າວປະຈຳອາທິດລະວ່າງວັນທີ **25 – 29 ທັນວາ 2017** ກ່ຽວກັບປະເດັນທີ່ດິນ ແລະ ຊັບພະຍາກອນທຳມະຊາດໃນປະເທດລາວ.

**ສະຫຼຸບຂ່າວໂດຍ:** ພະນັກງານສື່ສານ ກອງເລຂາ LIWG

## English news

**PM pushes for strict land management: Vientiane Times**

Prime Minister Thongloun Sisoulith has urged all sectors and authorities to close loopholes in the use and management of land, saying land should be protected for successive generations.

He reminded those present about the granting of land concessions by local authorities for banana plantations, which he said had resulted in the loss of forests, while growers had contaminated the land with chemicals.

He discussed the legal definition of concessions, saying that in some cases, where the length was originally set at 70 years, some investors asked for their concession to be extended to 90 years.

Mr Thongloun said the Land Law should be widely implemented but stressed that all activities must be carefully managed. The law should not be used as a legal tool to cheat people, he said.

**Laos-China Railway Confirmed to Be Completed by End of 2021: KPL**

Conducting construction activities in northern Laos is more challenging for contractors because there are many mountains and many tunnels need to be drilled in mountainous areas, according to Mr Jiandong.

"We still have four years to complete the railway construction in Laos. There may be some other challenges in the future, but we will solve such challenges during the process of engineering and another problem is that even though all activities of the construction are being conducted, land acquisitions in some areas are yet to be finished. We thus still need great cooperation from local governments in Laos," he said.

China-Laos railway is the first China's overseas route connecting with the railway system in China, using Chinese technology, equipment and investment.

**Land should benefit everyone PM: Vientiane Times**

Prime Minister Thongloun Sisoulith has stressed that the government's policy on land use should add value to land and benefit everyone in the country.

Mr Thongloun asked that the master plan and changes to the land law be written concurrently, noting that the Land Law must be amended where needed although most of the stipulations it contains are acceptable.

He said the amended law should make it clear whether land belongs to a private company through a concession agreement or to an individual, and that the government has the right to manage all land and monitor its use.
“This is the question we must answer,” Mr Thongloun said.

**Vientiane seeks investors to build expressway: Vientiane Times**

Vientiane authorities are seeking entrepreneurs to invest in and build The authorities have issued an announcement inviting interested local and foreign investors to competitively bid for the development of the the planned 15-km expressway linking the city to its north-eastern outskirts in Xaythany district.
According to the announcement, the investors must be financially able to compensate local people for the loss of their property, or any other party affected by the project, in line with Prime Ministerial Decree No. 84.
Under the decree, compensation must ensure that affected villagers are provided with better or similar living conditions compared to their circumstances prior to relocation.

**Govt vows to improve investment climate to drive growth: Vientiane Times**

Prime Minister Thongloun Sisoulith has told the cabinet to place more importance on improving the ease of doing business, to bolster economic growth in the coming year.
To improve the investment climate, Mr Thongloun told the relevant sectors to resolve problems that hinder business operations and streamline procedures to speed up the investment approval process through a one-stop service in a transparent manner in line with the law.
The cabinet was told to continue efforts to address unlawful business and service operations, especially illegal logging and wood exports, and the illegal excavation and exploitation of minerals and other natural resources.
Mr Thongloun told the relevant ministries to push for the development of mega projects so they went ahead according to plan and strengthened the economy.
These include the Laos-China railway, which is currently under construction, and other projects associated with the One Belt, One Road Initiative as well as the development of special economic zones.

## ຂ່າວພາສາລາວ

**ປະຕິທິນຂໍ້ມູນດ້ານກົດໝາຍເປັນສື່ຄວາມຮູ້ດ້ານນິຕິກຳ: ຂ່າວໂດຍໜັງສືພິມວຽງຈັນໃໝ່**

ປະຕິທິນເຜີຍແຜ່ຂໍ້ມູນທາງດ້ານກົດໝາຍປະຈຳປີ 2018 ໄດ້ຄົ້ນຄວ້າ ແລະ ຈັດພິມໂດຍການຮ່ວມມື ລະ ຫວ່າງອົງການຈັດຕັ້ງທາງສັງຄົມລາວ ແລະ ສາກົນ ເຊິ່ງເປັນສ່ວນໜຶ່ງໃນການສື່ສານຄວາມຮູ້ທາງດ້ານນິຕິກຳເຊັ່ນ: ລັດຖະທຳມະນູນ, ກົດໝາຍ, ດຳລັດ, ປຶດແນະນຳໃນຂົງເຂດທີ່ດິນ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ປົດບາດຍິງ-ຊາຍ ແລະ ສົນທິສັນຍາ.
ເພື່ອແນ່ໃສ່ເຮັດໃຫ້ປະຊາຊົນບັນດາເຜົ່າໃນເຂດຫ່າງໄກສອກຫຼີກສາມາດເຂົ້າເຖິງຂໍ້ມູນຂ່າວສານ, ມີສ່ວນຮ່ວມໃນການພັດທະນາແບບຍືນຍົງ, ປະກອບສ່ວນໂຄສະນາເຜີຍແຜ່ບັນດາລະບຽບການຂໍ້ກຳນົດ ແລະ ກົດໝາຍທີ່ພັກ-ລັດວາງອອກ ເພື່ອພ້ອມກັນຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ.

ພິທີນຳສະເໜີປະຕິທິນກ່ຽວກັບການເຜີຍແຜ່ຂໍ້ມູນດ້ານກົດໝາຍປະຈຳປີ 2018 ຈັດຂຶ້ນວັນທີ 19 ທັນວາ 2017 ຢູ່ທີ່ ອົງການບ້ານຈຸດສຸມ (VFI) ນະຄອນຫຼວງວຽງຈັນ ມີທ່ານນາງ ເຊແລດສະຕິນ ໂກຣແຊວ ຜູ້ອຳ ນວຍການ ອົງການເຮວ ວີເັດ ປະຈຳລາວ ທັງເປັນປະທານຄະນະບໍລິຫານງານ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG), ບັນດາຫົວໜ້າອົງ ການຈັດຕັ້ງພາກລັດ, ຜູ້ປະສານງານໂຄງການ (LIWG) ແລະ ແຂກຖືກເຊີນເຂົ້າຮ່ວມ.

**ຜົນກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນ ທັນວາ 2017: ຂ່າວໂດຍ Lao National Radio**

ກອງປະຊຸມລັດຖະບານ ສະໄໝສາມັນປະຈຳເດືອນ ທັນວາ ເຊິ່ງເປັນຄັ້ງສຸດທ້າຍຂອງປີ **2017** ໄດ້ດຳເນີນມາເປັນເວລາ 2 ວັນ ຄື: ວັນທີ 25-26 ທັນວາ 2017 ທີ່ສຳນັກງານນາຍົກລັດຖະມົນຕີ, ພາຍໃຕ້ການເປັນປະທານຂອງ ທ່ານ ທອງ ລຸນ ສີສຸລິດ ນາຍົກລັດຖະມົນຕີ; ມີບັນດາທ່ານຮອງນາຍົກລັດຖະມົນຕີ; ສະມາຊິກລັດຖະບານ ແລະ ພາກ ສ່ວນທີ່ ກ່ຽວຂ້ອງ ເຂົ້າຮ່ວມ.

ໃນຕອນທ້າຍຂອງກອງປະຊຸມ, ທ່ານນາຍົກລັດຖະມົນຕີ ກໍ່ໄດ້ສະຫຼຸບສັງລວມການເຄື່ອນໄຫວວຽກງານຈຸດສຸມທີ່ພົ້ນ ເດັ່ນຂອງລັດຖະບານ ໃນເດືອນ ທັນວາ ທີ່ຜ່ານມາ. ໜຶ່ງໃນປະເດັນທີ່ສຳຄັນກໍ່ແມ່ນ

- ກ່ຽວກັບສະພາບການຈັດຕັ້ງປະຕິບັດວຽກງານ ໃນເດືອນ ທັນວາ 2017 ທີ່ຜ່ານມາ ລັດຖະບານ ໄດ້ປະຕິບັດ ວຽກງານຈຸດສຸມສຳຄັນຫຼາຍດ້ານ ໜຶ່ງໃນນັ້ນແມ່ນ ການແກ້ໄຂບັນຫາການລັກລອບຄ້າໄມ້ ແລະ ການລັກລອບ ຂຸດຄົ້ນຄຳ ທີ່ເກີດຂຶ້ນຢູ່ບາງແຂວງ; ການຈັດຕັ້ງປະຕິບັດໂຄງການກໍ່ສ້າງທາງປູຢາງສອງຊັ້ນ 3 ເສັ້ນ ຢູ່ແຂວງໄຊ ສົມບູນ; ການແຕ່ງຕັ້ງຄະນະຊີ້ນຳລະດັບຊາດ ເພື່ອໄກ່ເກ່ຍ ແລະ ຄ່າຊົດເຊີຍໂຄງການລົງ ທຶນຂະໜາດໃຫຍ່ ຂອງພາກລັດ ແລະ ພາກເອກະຊົນ; ການອະນຸຍາດເປີດນຳໃຊ້ທ່າເຮືອຢູ່ເຂດສາມລ່ຽມຄຳ ເປັນທ່າ ເຮືອສາກົນ ເມືອງຕົ້ນເຜີ້ງ, ແຂວງບໍ່ແກ້ວ. ນອກນັ້ນຍັງມີການລາຍງານກ່ຽວກັບ ດຳລັດວ່າດ້ວຍ ເຂດເສດຖະກິດພິເສດ ສະບັບປັບປຸງ ໃນກອງປະຊຸມດ້ວຍ.
- ໃນກອງປະຊຸມທ່ານນາຍົກກໍ່ໄດ້ຊີ້ ຊີ້ນຳວຽກງານຈຸດສຸມໃນເດືອນ ມັງກອນ 2018. ປະເດັນເດັ່ນໜຶ່ງທີ່ສຳຄັນ ໃນນັ້ນແມ່ນ ວຽກງານການປັບປຸງບັນດານິຕິກຳ ລຸ່ມກົດໝາຍ ແລະ ຮ່າງກົດໝາຍທີ່ຈະນຳມາຜ່ານກອງປະຊຸມ ລັດຖະບານ ໃນເດືອນມັງກອນ ແລະ ກຸມພາ 2018 ນີ້ ເຊິ່ງໜຶ່ງໃນນັ້ນປະເດັນທີ່ສຳຄັນກໍ່ຄື ການສືບຕໍ່ ປັບປຸງ ບັນດາກົດໝາຍທີ່ຈະນຳໄປຜ່ານກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ເຊິ່ງໃນນັ້ນກໍ່ລວມ ເຖິງກົດໝາຍ ວ່າດ້ວຍທີ່ດິນສະບັບປັບປຸງ.

ອ່ານປະເດັນນີ້ເພີ່ມເຕີມໄດ້**ທີ່ນີ້**.

**ຫາລືການຮ່ວມມືສາກົນ ໜຶ່ງແລວໜຶ່ງເສັ້ນທາງ:ຂ່າວໂດຍ ໜັງສືພິມວຽງຈັນໃໝ່**

ຈຸດປະສົງໃນການຈັດເພື່ອເຜີຍແຜ່ໝາກຜົນການເຊື່ອມໂຍງພາກພື້ນ ແລະ ສາກົນຂອງລາວ ກໍ່ຄືແຈ້ງກ່ຽວກັບ ຜົນສຳເລັດຂອງກອງປະຊຸມເວທີປຶກສາຫາລືຂັ້ນສູງ ວ່າດ້ວຍການຮ່ວມມືສາກົນ "ໜຶ່ງແລວໜຶ່ງເສັ້ນທາງ" ທີ່ທ່ານ ບຸນຍັງ ວໍລະຈິດ ປະທານປະເທດເຂົ້າຮ່ວມໃນຕົ້ນເດືອນພຶດສະພາ 2017 ເພື່ອໃຫ້ພະນັກງານຈາກບັນດາຂະແໜງການຕ່າງໆ ແລະ ອຳນາດການປົກຄອງທ້ອງຖິ່ນຂອງ 4 ແຂວງພາກເໜືອ ໄດ້ຮັບຮູ້ ເຂົ້າໃຈ ແລະ ແລກປ່ຽນບົດຮຽນນຳກັນປຶກສາ ຫາລືກັນເຖິງກາລະໂອກາດ ແລະ ສິ່ງທ້າທາຍ ພ້ອມທັງວິທີການ ເພື່ອຍາດແຍ່ງເອົາກາລະໂອກາດ ແລະ ຜົນປະໂຫຍດ ຈາກການຮ່ວມມືຂໍ້ລິເລີ່ມດັ່ງກ່າວ.

**ຫຼາຍບັນຫາຍັງຖ່ວງດຶງການພັດທະນາປະເທດຊາດ: ໜັງສືພິມລາວພັດທະນາ**

ບາງຂະແໜງການສູນກາງຍັງບໍ່ທັນເອົາໃຈໃສ່ເທົ່າທີ່ຄວນຕໍ່ ການປັບລະບົບຂອງຕົນໃຫ້ກົມກຽວກັບບັນດາມະຕິຂອງສະພາແຫ່ງຊາດ ຫຼື ອຳນາດການປົກຄອງທ້ອງຖິ່ນກັບສະພາທ້ອງຖິ່ນ, ຍັງບໍ່ທັນເອກະພາບເປັນອຸປະສັກໃຫ້ແກ່ການຕິດຕາມ, ກວດກາ ແລະ ກວດສອບໃຫ້ໄປລວງດຽວ; ການຕິດຕາມ, ຊຸກຍູ້ ແລະ ປະເມີນຜົນການຈັດຕັ້ງປະຕິບັດບັນດາໂຄງການລົງທຶນຂະໜາດໃຫຍ່ຍັງບໍ່ທັນເປັນລະບົບດີ, ມີຊ່ອງວ່າງໃຫ້ແກ່ການສວຍໂອກາດຫຼົບຫຼີກການປະຕິບັດກົດໝາຍ ແລະ ລະບຽບການເຊັ່ນ: ການລັກນຳເຂົ້າວັດຖຸດິບ, ວັດສະດຸກໍ່ສ້າງ, ພາຫະນະ, ນ້ຳມັນ ແລະ ອື່ນໆ ເຮັດໃຫ້ລັດສູນເສຍລາຍຮັບເປັນຈຳນວນຫຼວງຫຼາຍ; ການປະຕິບັດນະໂຍບາຍກໍ່ຄື ກົດໝາຍທີ່ດິນເຫັນວ່າມີຫຼາຍຊ່ອງວ່າງນຳໄປສູ່ຄວາມສັບສົນ.

**ໂຄງການກໍ່ສ້າງເສັ້ນທາງດ່ວຍຄູ່ຂະໜານ ນວ ໄລຍະທີ I ຈະເປີດຂາຍຊອງປະມູນ 2ມັງກອນ2018ນີ້: ຂ່າວໂດຍເສດຖະກິດການຄ້າ**

ໂຄງການກໍ່ສ້າງເສັ້ນທາງດ່ວນຄູ່ຂະໜານຖະໜົນໄກສອນ ພົມວິຫານ, ນະຄອນຫຼວງວຽງຈັນ ໄລຍະທີ I ແຕ່ເຂດເສດຖະກິດສະເພາະບຶງທາດຫຼວງຫາດົງໝາກຄາຍຍາວປະມານ 15 ກິໂລແມັດໃກ້ຈະລົງມືກໍ່ສ້າງ.

ໃນນັ້ນການເຂົ້າມາລົງທຶນຕ້ອງມີຄວາມພ້ອມທາງດ້ານການເງິນ ສຳລັບການຊົດເຊີຍສິ່ງທີ່ຈະສູນເສຍ, ຈ່າຍຄ່າຊົດເຊີຍໃຫ້ປະຊາຊົນທີ່ຖືກຜົນກະທົບໂດຍຜ່ານການໄກ່ເກ່ຍຂອງຄະນະກຳມະທິການທີ່ຖືກແຕ່ງຕັ້ງ ແລະ ປະຕິບັດຕາມດຳລັດວ່າດ້ວຍ ການທົດແທນຄ່າເສຍຫາຍ ແລະ ຈັດສັນຍົກຍ້າຍປະຊາຊົນອອກຈາກໂຄງການພັດທະນາຂອງລັດ.

**ນາຍົກເນັ້ນຕ້ອງເລັ່ງແກ້ໄຂປະກົດການບໍ່ດີຕ່າງໆໃນສັງຄົມໃຫ້ໝົດໄປ: ຂ່າວໂດຍໜັງສືພພິມລາວພັດທະນາ**

ທ່ານນາຍົກລັດຖະມົນຕີ ທອງລຸນ ສີສຸລິດ ໄດ້ຊີ້ນຳໃຫ້ສະມາຊິກລັດຖະບານ ເອົາໃຈໃສ່ຈັດຕັ້ງປະຕິບັດໜ້າທີ່ຂອງແຕ່ລະຂະແໜງການດ້ວຍຄວາມຮັບຜິດຊອບສູງ, ໂດຍສະເພາະສືບຕໍ່ເອົາໃຈໃສ່ວຽກງານຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

ນອກນຈາກນັ້ນແລ້ວ ແມ່ນຕ້ອງ ເພີ່ມທະວີການປະສານງານສົບທົບກັບອຳນາດການປົກຄອງທ້ອງຖິ່ນ ເພື່ອແກ້ໄຂບັນກາທາງດ້ານເສດຖະກິດ-ສັງຄົມທີ່ມີລັກສະນະພົ້ນເດັ່ນ, ມີຜົນກະທົບຫຼາຍ ເປັນຕົ້ນແມ່ນບັນຫາປາຕາຍຢູ່ແຂວງບໍ່ແກ້ວ, ການໄກ່ເກ່ຍເວນຄືນທີ່ດິນຕິດພັນກັບໂຄງການກໍ່ສ້າງເສັ້ນທາງລົດໄຟຢູ່ບັນດາແຂວງພາກເໜືອ, ການແກ້ໄຂບັນຫາທີ່ຢູ່ອາໄສ ແລະ ເຂດການຜະລິດຂອງປະຊາຊົນທີ່ຕິດພັນກັບໂຄງການເຂື່ອນໄຟຟ້າຢູ່ແຂວງບໍລິຄຳໄຊ ແລະ ອື່ນໆ.

**ແຂວງວຽງຈັນວາງແຜນໂຄງການຄຸ້ມຄອງປ່າສະຫງວນພູມຶດ-ພູສັນເຂື່ອນ: ຂ່າວໂດຍ ເສດຖະກິດ-ສັງຄົມ**

ທ່ານບຸນເພັດ ດວງໂດດ ກ່າວວ່າ ເຫດຜົນທີ່ເລືອກເອົາປ່າສະຫງວນແຫ່ງນີ້ປະຕິດໂຄງການການຄຸ້ມຄ້ອງປ່າສະຫງວນແບບມີສ່ວນຮ່ວມຂອງຊຸມຊົນ ຍ້ອນວ່າ ມີຄວາມອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດເປັນຕົ້ນແມ່ນປ່າໄມ້ ແລະ ເຄື່ອງປ່າຂອງດົງ, ມີຄວາມຫຼາກຫຼາຍດ້ານສັດນ້ຳ-ສັດປ່າ ແລະ ຍັງມີສັດປ່າປະເພດສັດໃຫຍ່ຄື: ງົວປ່າກະທິງທີ່ເປັນສັດລ້ຽງລູກດ້ວຍນ້ຳນົມປະເພດຫາງຫ້າມໃນອາຊີ ແລະ ໃນ ສປປ ລາວ ທີ່ເປັນສັດປ່າທີ່ຫາຍາກ ແລະ ໃກ້ຈະສູນພັນຢູ່ໃນໂລກ, ມີຄວາມສຳຄັນຕໍ່ລະບົບນິເວດວິທະຍາ, ມີຮ່ອງຮອຍປະຫວັດສາດ, ວັດທະນາທຳ ແລະ ທຳມະຊາດ.